ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ອຸດສາຫະກຳ ແລະ ການຄ້າ
ລັດວິສາຫະກິດໄຟຟ້າລາວ

ເລກທີ: 1942/ຟຟລ.ຫຟຟລ
ນະຄອນຫຼວງວຽງຈັນ, ວັນທີ: 19 MAY 2026

# ໜັງສືເຊີນເຂົ້າຮ່ວມປະມູນ

1. ລັດວິສາຫະກິດໄຟຟ້າລາວ ໄດ້ນຳໃຊ້ຮ່ວງເງິນແຜນງົບປະມານ ແລະ ການລົງທຶນ ປີ 2026 ເພື່ອດຳເນີນການປະມູນເປີດກວ້າງພາຍໃນ ກ່ຽວກັບການສ້ອມແປງ ແລະ ບຳລຸງຮັກສາລ້າງອະນາໄມແກ້ວ, ຄອມໄພສິດ ພ້ອມຢາແນວຊິລິໂຄນຮ່ອງແກ້ວ ແລະ ຄອມໂພສິດຄືນ ຂອງອາຄານສຳນັກງານໃຫຍ່ ຟຟລ ໃສກປ່າຫຼວງ. ໂດຍຂໍຖືເປັນກຽດເຊີນບັນດາຫ້າງຮ້ານ ຫຼື ບໍລິສັດທີ່ສົນໃຈ ແລະ ມີເງື່ອນໄຂເໝາະສົມ ເຂົ້າຮ່ວມປະມູນຈັດຊື້ໃນຄັ້ງນີ້, ຮັບປະກັນລາຄາຕາມທີ່ສະເໜີໃນປື້ມປະມູນ 60 ວັນ ຫຼັງເປີດຊອງປະມູນ, ໄລຍະບໍລິການ 60 ວັນ ແລະ ຮັບປະກັນຄຸນນະພາບໄລຍະ 01 ປີ.
2. ການປະມູນນີ້ຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງພາຍໃນ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງ ສະບັບເລກທີ: 30/ສພຊ, ລົງວັນທີ: 2 ພະຈິກ 2017. ແລະ ເອກະສານ ຄຳແນະນຳການໃຊ້ກົດໝາຍ ສະບັບ ເລກທີ: 0477/ກງ, ລົງວັນທີ: 13 ກຸມພາ 2019, ຄຳແນະນຳເພີ່ມເຕີມສຳລັບ ມາດຕາ 23 ແລະ ມາດຕາ 31 ຂອງຄຳແນະນຳການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ: 1995/ກງ, ລົງວັນທີ: 24 ມິຖຸນາ 2019.
3. ຜູ້ປະມູນຕ້ອງມີສຳເນົາເອກະສານໃບອະນຸຍາດດຳເນີນທຸລະກິດດ້ານການບໍລິການ ສ້ອມແປງ ແລະ ບຳລຸງຮັກສາລ້າງອະນາໄມແກ້ວ ໃນຕຶກອາຄານ ແລະ ໃບມອບພັນທະອາກອນປີ 2024 ຫຼື 2025 ທີ່ຖືກຕ້ອງຕາມກົດໝາຍ.
4. ບໍລິສັດໃດທີ່ມີເງື່ອນໄຂເໝາະສົມ ແລະ ມີຄວາມສົນໃຈສາມາດຕິດຕໍ່ພົວພັນ ແລະ ເຮັດໜັງສືເຈດຈຳນົງຊື້ເອກະສານປະມູນ ໄດ້ທີ່ລັດວິສາຫະກິດໄຟຟ້າລາວ (ສຳນັກງານໃຫຍ່), ຖະໜົນມິດຕະພາບລາວ-ໄທ, ຕູ້ ປ.ນ 309, ບ້ານ ທົ່ງກາງ, ເມືອງ ສີສັດຕະນາກ, ນະຄອນຫລວງວຽງຈັນ. ໂທ: (856-21) 316094-1614, ທີ່ຂາເຂົ້າຊັ້ນ 01 ຕຶກສຳນັກງານໃຫຍ່ ລັດວິສາຫະກິດໄຟຟ້າລາວ ໃນໂມງລັດຖະການ, ເລີ່ມແຕ່ວັນທີ: 25/05/2026 ຫາ ວັນທີ: 19 /06/2026, ໃນລາຄາ 500,000 ກີບ/ຊອງ ຈຳນວນເງິນດັ່ງກ່າວຈະບໍ່ມີການສົ່ງຄືນ (ວິທີການຊຳລະຕ້ອງຈ່າຍເປັນເງິນສົດ).
5. ຊອງປະມູນຕ້ອງສົ່ງກ່ອນເວລາ 09:00 ໂມງ ຂອງວັນທີ: 19/06/2026 ທີ່ຫ້ອງປະຊຸມຊັ້ນ 08, ຫ້ອງ 801, ສຳນັກງານໃຫຍ່. ຊອງປະມູນໃດສົ່ງຊ້າເກີນເວລາທີ່ໄດ້ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ, ຊອງປະມູນທຸກໆຊອງໄດ້ເປີດໃນເວລາດຽວກັນໂດຍຊ້ອງໜ້າຄະນະກຳມະການຈັດຊື້ ລັດວິສາຫະກິດໄຟຟ້າລາວ, ຕາງໜ້າກະຊວງການເງິນ ແລະ ຕົວແທນຂອງຜູ້ເຂົ້າຮ່ວມແຂ່ງຂັນປະມູນທີ່ສົນໃຈເຂົ້າຮ່ວມ.
6. ຜູ້ປະມູນຕ້ອງມີເງິນຄ້ຳປະກັນຊອງປະມູນໃນອັດຕາ 2% ຂອງມູນຄ່າທີ່ສະເໜີໃນການປະມູນ (ເປັນໜັງສືຄ້ຳປະກັນຈາກທະນາຄານ ທີ່ນຳໃຊ້ເຖິງ ວັນທີ: 19/09/2026) ຫຼື ແຊັກວິຊາ.

ຜູ້ອຳນວຍການໃຫຍ່

ບໍລິສັດ ວິສາຫະກິດໄຟຟ້າລາວ ELECTRICITE DU LAOS

ສຸລິຍາ ມະນີວົງ
ຮອງຜູ້ອຳນວຍການໃຫຍ່